ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People’s Democratic Republic

Peace Independence Democracy Unity Prosperity

# ບົດລາຍງານສະຖິຕິການເງິນແຫ່ງລັດ ປະຈຳ 9 ເດືອນ ປີ 2021

# Government Finance Statistics

# Quarter 3 Report 2021





ກະຊວງການເງິນ

Ministry of Finance

# ບົດລາຍງານສະຖິຕິການເງິນແຫ່ງລັດປະຈຳ 9 ເດືອນ ປີ 2021

## ສະພາບລວມການຈັດຕັ້ງປະຕິບັດງົບປະມານປະຈຳ 9 ເດືອນ ປີ 2021

ບົດລາຍງານສະບັບນີ້ ໄດ້ຮວບຮວມຂໍ້ມູນສະຖິຕິຂອງການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ໃນໄລຍະ 9 ເດືອນ ປີ 2021 ຕາມມາດຕະຖານສາກົນ GFS ( ເຊິ່ງລາຍຮັບບໍ່ໄດ້ລວມເອົາລາຍຮັບຈາກການຂາຍຊັບສິນ ແລະ ລາຍຮັບເກັບຄືນຕົ້ນທຶນເງິນກູ້ຢືມປ່ອຍຕໍ່ ນັບຕັ້ງແຕ່ ເດືອນ ມັງກອນ ເຖິງ ເດືອນ ກັນຍາ ປີ 2021) ແລະ ໄດ້ສົມທຽບກັບໄລຍະດຽວກັນຂອງປີທີ່ຜ່ານມາ ເພື່ອຮັບຮູ້ເຖິງການປ່ຽນແປງຂອງການຈັດຕັ້ງປະຕິບັດງົບປະມານໃນແຕ່ລະໄລຍະ ແລະ ເພື່ອເປັນຂໍ້ມູນເບື້ອງຕົ້ນໃນການສຶກສາຄົ້ນຄວ້າ ຂັ້ນຕໍ່ໄປ.

ສະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ໃນໄລຍະ ປີ 2021 ຍັງມີຄວາມບໍ່ແນ່ນອນສູງ. ສ່ວນໜຶ່ງຍ້ອນຜົນກະທົບຈາກການແຜ່ລະບາດພະຍາດ ໂຄວິດ-19 ຮອບສອງພາຍໃນປະເທດ ທີ່ເລີ່ມແຕ່ເດືອນ ເມສາ ເປັນຕົ້ນມາ ທີ່ມີຜູ້ຕິດເຊື້ອໃໝ່ເພີ່ມຂຶ້ນ ສົ່ງຜົນກະທົບຕໍ່ເສດຖະກິດ ເປັນວົງກວ້າງ ເຮັດໃຫ້ ລັດຖະບານ ຕ້ອງໄດ້ປະຕິບັດມາດຕະການປ້ອງກັນຢ່າງເຄັ່ງຄັດ ແລະ ເຂັ້ມງວດ. ພ້ອມນັ້ນ. ຍັງສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2021 ພໍສົມຄວນ ໂດຍສະເພາະຕໍ່ການຈັດເກັບລາຍຮັບງົບປະມານແຫ່ງລັດ. ຄຽງຄູ່ກັນນັ້ນ. ລັດຖະບານ ໄດ້ວາງນະໂຍບາຍ ແລະ ມາດຕະການທາງດ້ານການເງິນຫຼາຍດ້ານ ເພື່ອຫຼຸດຜ່ອນຜົນກະທົບຂອງປະຊາຊົນ. ບັນດາບໍລິສັດ ແລະ ຜູ້ປະກອບການ ທົ່ວສັງຄົມ ເປັນຕົ້ນ ທາງດ້ານລາຍຮັບໄດ້ປະຕິບັດນະໂຍບາຍຍົກເວັ້ນ ການເກັບອາກອນລາຍໄດ້ຈາກເງິນເດືອນຂອງຜູ້ອອກແຮງງານ ທັງພາກລັດ ແລະ ເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະ ເດືອນ ເມສາ. ພຶດສະພາ ແລະ ມິຖຸນາ; ປະຕິບັດນະໂຍບາຍຍົກເວັ້ນອາກອນລາຍໄດ້ ຂອງຈຸນລະວິສາຫະກິດ. ເລື່ອນການເສຍຄ່າທຳນຽມທາງ ແລະ ອື່ນໆ. ທາງດ້ານລາຍຈ່າຍ. ກະຊວງການເງິນ ໄດ້ສະເໜີລັດຖະບານ ອະນຸມັດໃຫ້ມີການປະຢັດ ແລະ ໂຈະບາງລາຍຈ່າຍທີ່ບໍ່ທັນຈຳເປັນຈຳນວນໜຶ່ງ ໂດຍສະເພາະລາຍຈ່າຍຊື້ໃໝ່. ລາຍຈ່າຍໄປວຽກທາງການ ແລະ ລາຍຈ່າຍອື່ນໆ ເພື່ອບໍ່ໃຫ້ກະທົບຫຼາຍຕໍ່ການຂາດດຸນງົບປະມານ.

ຜົນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ໃນໄລຍະ 9 ເດືອນປີ 2021. ລາຍຮັບງົບປະມານທັງໝົດ ບັນລຸໄດ້ 16.149 ຕື້ກີບ (ທຽບໄດ້ 8,8% ຂອງ GDP ຫຼື 61,8% ຂອງແຜນ). ທຽບໃສ່ໄລຍະດຽວກັນຂອງປີ 2020 ເພີ່ມຂຶ້ນ 7,3%. ໃນນີ້. ລາຍຮັບພາຍໃນ ເພີ່ມຂຶ້ນ 6,5% ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ ເພີ່ມຂຶ້ນ 16,3%.

ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານ ໃນໄລຍະ 9 ເດືອນປີ 2021 ບັນລຸໄດ້ 16.957 ຕື້ກີບ (ທຽບໄດ້ 9,3% ຂອງ GDP ຫຼື 53,7% ຂອງແຜນ) ທຽບໃສ່ ໄລຍະດຽວກັນຂອງປີ 2020 ຫຼຸດລົງ 12,3% ເນື່ອງຈາກ ລາຍຈ່າຍບໍລິຫານປົກກະຕິຫຼຸດລົງ 2,6% ແລະ ລາຍຈ່າຍລົງທຶນ ຫຼຸດລົງ 32,5%.

ອີງຕາມ ຜົນການຈັດຕັ້ງປະຕິບັດແຜນງົບປະມານ 9 ເດືອນ ປີ 2021 ສະແດງໃຫ້ເຫັນເຖິງ ການຂາດດຸນງົບປະມານ ຈຳນວນ 807 ຕື້ກີບ ໃນນີ້. ການດຸ່ນດ່ຽງລາຍຮັບພາຍໃນຕໍ່ລາຍຈ່າຍບໍລິຫານປົກກະຕິສາມາດປະຕິບັດໄດ້ເກີນດຸນ 1.621 ຕື້ກີບ ເທົ່າກັບ 0,9% ຂອງ GDP ສົ່ງຜົນໃຫ້ດຸນງົບປະມານລວມຂາດດຸນ 0,4% ຂອງ GDP.

**ຕາຕະລາງ 1:** ການຈັດຕັ້ງປະຕິບັດລາຍຮັບພາຍໃນ (ແຍກຕາມຮ່ວງລາຍຮັບ) ໄລຍະ 9 ເດືອນ ປີ 2021.

(ຫົວໜ່ວຍ ຕື້ກີບ)

| ລ/ດ | ເນື້ອໃນ | 9 ເດືອນ 2018 | 9 ເດືອນ 2019 | 9 ເດືອນ 2020 | 9 ເດືອນ 2021 | % ທຽບປີ 2020 |
|---|---|---|---|---|---|---|
| *I* | ***ລາຍຮັບຈາກພາສີ-ອາກອນ*** | ***12.109*** | ***13.027*** | ***11.426*** | ***12.031*** | ***5,3%*** |
| 1 | ອາກອນກຳໄລ | 1.236 | 1.293 | 1.169 | 1.123 | -3,9% |
| 2 | ອາກອນລາຍໄດ້ | 1.169 | 1.200 | 1.042 | 1.019 | -2,2% |
| 3 | ພາສີທີ່ດິນ | 171 | 174 | 164 | 88 | -46,2% |
| 4 | ອາກອນມູນຄ່າເພີ່ມ | 3.970 | 4.369 | 3.274 | 3.781 | 15,5% |
| 5 | ອາກອນຊົມໃຊ້ | 3.430 | 3.713 | 2.772 | 3.370 | 21,6% |
| 6 | ພາສີຂາເຂົ້າ | 723 | 768 | 796 | 598 | -24,9% |
| 7 | ພາສີຂາອອກ | 23 | 32 | 11 | 261 | 2270,9% |
| 8 | ຄ່າທຳນຽມຈົດທະບຽນ | 5 | 8 | 30 | 31 | 3,0% |
| 9 | ຄ່າທຳນຽມຕ່າງໆ | 552 | 649 | 1.476 | 1.036 | -29,8% |
| 10 | ຄ່າຊັບພະຍາກອນທຳມະຊາດ | 463 | 476 | 387 | 524 | 35,3% |
| 11 | ລາຍຮັບຈາກໄມ້ | 33 | 9 | 35 | 13 | -62,0% |
| 12 | ຄ່າພາກຫຼວງຈາກໄຟຟ້າ | 314 | 334 | 270 | 187 | -30,8% |
| *II* | ***ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ*** | ***2.655*** | ***2.635*** | ***2.054*** | ***2.325*** | ***13,2%*** |
| 1 | ລາຍຮັບຈາກຄ່າເຊົ່າ | 27 | 27 | 32 | 41 | 27,5% |
| 2 | ຄ່າສຳປະທານ | 62 | 63 | 57 | 46 | -18,8% |
| 3 | ຄ່າປັບໃໝ | 33 | 19 | 30 | 16 | -46,7% |
| 4 | ລາຍຮັບບໍລິຫານວິຊາການ | 517 | 387 | 477 | 684 | 43,4% |
| 5 | ເງິນປັນຜົນ | 840 | 847 | 451 | 492 | 9,0% |
| 6 | ດອກເບ້ຍເງິນກູ້ | 531 | 567 | 151 | 124 | -17,9% |
| 7 | ຄ່າບິນຜ່ານ | 605 | 653 | 376 | 221 | -41,1% |
| 8 | ກອງທຶນ | 1 | 18 | 349 | 625 | 78,9% |
| 9 | ລາຍຮັບອື່ນໆ | 38 | 53 | 132 | 76 | -42,7% |
| *III* | ***ລວມລາຍຮັບພາຍໃນ*** | ***14.764*** | ***15.662*** | ***13.480*** | ***14.356*** | ***6,5%*** |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 2 :** ລາຍຮັບຈາກການຊ່ວຍເຫຼືອລ້າ 9 ເດືອນ ປີ 2021 ທຽບກັບໄລຍະຜ່ານມາ

(ຫົວໜ່ວຍ: ຕື້ກີບ)

| ລ/ດ | ເນື້ອໃນ | 9 ເດືອນ 2018 | 9 ເດືອນ 2019 | 9 ເດືອນ 2020 | 9 ເດືອນ 2021 | % ທຽບປີ 2020 |
|---|---|---|---|---|---|---|
| ***I*** | ***ລາຍຮັບຈາກການຊ່ວຍເຫຼືອລ້າ*** | ***1.244*** | ***479*** | ***1.543*** | ***1.794*** | ***16,3%*** |
| 1 | ການຊ່ວຍເຫຼືອລ້າທີ່ເປັນໂຄງການ | 479 | 479 | 483 | 487 | 0,8% |
| 2 | ການຊ່ວຍເຫຼືອລ້າທີ່ບໍ່ເປັນໂຄງການ | 511 | - | 1.060 | 823 | -22,4% |
| 3 | ການຊ່ວຍເຫຼືອລ້າ ດັດແກ້ມະຫາພາກ | 253 | - | - | 485 | - |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 3:** ການຈັດຕັ້ງປະຕິບັດລາຍຈ່າຍ (ແຍກຕາມຮ່ວງລາຍຈ່າຍ) 9 ເດືອນ ປີ 2021 ທຽບກັບໄລຍະຜ່ານມາ

(ຫົວໜ່ວຍ ຕື້ກີບ)

| ລ/ດ | ເນື້ອໃນ | 9 ເດືອນ 2018 | 9 ເດືອນ 2019 | 9 ເດືອນ 2020 | 9 ເດືອນ 2021 | % ທຽບປີ 2020 |
|---|---|---|---|---|---|---|
| 1 | ເງິນເດືອນ ແລະ ເງິນອຸດໜູນ | 7.444 | 7.786 | 7.923 | 8.133 | 2,7% |
| | ເງິນເດືອນພື້ນຖານ | 6.011 | 6.467 | 6.590 | 6.624 | 0,5% |
| | ເງິນອຸດໜູນ | 1.433 | 1.319 | 1.333 | 1.509 | 13,2% |
| 2 | ລາຍຈ່າຍດັດສົມສິ່ງເສີມ | 1.706 | 1.876 | 2.006 | 1.833 | -8,6% |
| | ນະໂຍບາຍ ແລະ ຊ່ວຍໜູນອື່ນໆ | 1.013 | 1.071 | 1.104 | 1.203 | 9,0% |
| | ດັດສົມທົ່ວໄປ | 664 | 762 | 865 | 582 | -32,7% |
| | ປະກອບສ່ວນອົງການຈັດຕັ້ງ | 29 | 43 | 38 | 47 | 23,7% |
| 3 | ບໍລິຫານ ແລະ ຊື້ໃໝ່ | 1.696 | 1.655 | 1.442 | 1.068 | -25,9% |
| 4 | ສົ່ງຄືນເງິນ VAT | - | - | - | 17 | - |
| 5 | ຊຳລະດອກເບ້ຍ | 1.826 | 2.142 | 1.639 | 1.361 | -17,0% |
| | ຕ່າງປະເທດ | 1.522 | 1.798 | 1.401 | 1.057 | -24,6% |
| | ພາຍໃນ | 305 | 346 | 238 | 303 | 27,3% |
| 6 | ລາຍຈ່າຍອື່ນໆ | 29 | 88 | 64 | 144 | 125,0% |
| | ເງິນແຮລັດຖະບານ | 29 | 43 | 64 | 84 | 31,3% |
| | ຄັງສະສົມແຫ່ງລັດ | 0 | 45 | - | 60 | - |
| | ລາຍຈ່າຍເງິນເກີນແຜນປີຜ່ານມາ | 0 | 0 | 0 | 178 | - |
| I | ***ລາຍຈ່າຍບໍລິຫານປົກກະຕິ*** | ***12.701*** | ***13.548*** | ***13.074*** | ***12.734*** | ***-2,6%*** |
| II | ***ລາຍຈ່າຍລົງທຶນຂອງລັດ*** | ***9.662*** | ***6.225*** | ***6.255*** | ***4.223*** | ***-32,5%*** |
| 1 | ລົງທຶນພາຍໃນ | 2.574 | 2.311 | 1.892 | 1.379 | -27,1% |

| | | | | | | |
|---|---|---|---|---|---|---|
| 2 | ລົງທຶນຕ່າງປະເທດ | 7.087 | 3.914 | 4.362 | 2.845 | -34,8% |
| | ກູ້ຢືມເປັນໂຄງການ | 6.097 | 2.342 | 2.819 | 1.535 | -45,5% |
| | ຊ່ວຍເຫຼືອລ້າເປັນໂຄງການ | 479 | 479 | 483 | 487 | 0,8% |
| | ຊ່ວຍເຫຼືອລ້າບໍ່ເປັນໂຄງການ | 511 | 1.093 | 1.060 | 823 | -22,4% |
| III | *ລວມລາຍຈ່າຍທັງໝົດ* | *22.364* | *19.772* | *19.328* | *16.957* | *-12,3%* |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 4:** ການດຸ່ນດ່ຽງງົບປະມານແຫ່ງລັດ ປະຈຳ 9 ເດືອນ ປີ 2021 (ຫົວໜ່ວຍ:ຕື້ກີບ)

| ເນື້ອໃນ | ແຜນປີ 2021 (ຕື້ກີບ) | ປະຕິບັດໄດ້ (ຕື້ກີບ) | %ແຜນປີ 2021 | %ຕໍ່ GDP |
|---|---|---|---|---|
| *ລາຍຮັບທັງໝົດ* | *26.138* | *16.150* | *61.8%* | *8,84%* |
| **ລາຍຮັບພາຍໃນ** | **23.718** | **14.356** | **60.5%** | **7,86%** |
| ລາຍຮັບຈາກພາສີ-ອາກອນ | 19.985 | 12.031 | 60.2% | 6,59% |
| ລາຍຮັບບໍ່ແມ່ນພາສີອາກອນ | 3.733 | 2.325 | 62.3% | 1,27% |
| **ລາຍຮັບຈາກການຊ່ວຍເຫຼືອລ້າ** | **2.420** | **1.794** | **74.1%** | **0,98%** |
| ເງິນຊ່ວຍເຫຼືອລ້າທີ່ເປັນໂຄງການ | 720 | 487 | 67.6% | 0,27% |
| ເງິນຊ່ວຍເຫຼືອບໍ່ເປັນໂຄງການ | 1.700 | 823 | 48.4% | 0,45% |
| **ລາຍຮັບຈາກການປະກອບສ່ວນຂອງສັງຄົມ** | **-** | **485** | **-** | **0,27%** |
| *ລວມລາຍຈ່າຍທັງໝົດ* | *31.583* | *16.958* | *53.7%* | *9,29%* |
| ລາຍຈ່າຍບໍລິຫານ | 21.277 | 12.734 | 59.8% | 6,97% |
| ລາຍຈ່າຍລົງທຶນ | 10.306 | 4.223 | 41.0% | 2,31% |
| **ດຸ່ນດ່ຽງຮັບພາຍໃນຕໍ່ລາຍຈ່າຍບໍລິຫານ** | **2.441** | **16.221** | **664.5%** | **8,88%** |
| *ດຸ່ນດ່ຽງລວມ* | *5.445* | *808* | *14.8%* | *0,44%* |
| ດຸ່ນດ່ຽງບໍ່ລວມເງິນຊ່ວຍເຫຼືອລ້າ | 7.865 | 2.602 | 33.1% | 1,42% |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ